**ປະທານປະເທດ**
**ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ນະຄອນຫຼວງວຽງຈັນ, ວັນທີ 18 ທັນວາ 2023

ສົມເດັດ,

ໃນນາມປະຊາຊົນລາວ ແລະ ໃນນາມສ່ວນຕົວ, ຂ້າພະເຈົ້າ ຂໍສົ່ງຄໍາຊົມເຊີຍຢ່າງຈິງໃຈ ແລະ ພອນໄຊອັນປະເສີດ ມາຍັງ ສົມເດັດ ທີ່ໄດ້ຂຶ້ນຄອງລາດເປັນກະສັດອົງທີ XVII ແຫ່ງລັດກູເວດ.

ຂ້າພະເຈົ້າ ມີຄວາມປິຕິຍິນດີ ແລະ ເພິ່ງພໍໃຈເປັນຢ່າງຍິ່ງ ຕໍ່ການຮ່ວມມືທີ່ມີໝາກຜົນ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດກູເວດ ຕະຫຼອດໄລຍະທີ່ຜ່ານມາ ແລະ ເຊື່ອໝັ້ນວ່າ ສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມ ລະຫວ່າງ ສອງປະເທດພວກເຮົາ ຈະສືບຕໍ່ໄດ້ຮັບການຮັດແໜ້ນ ແລະ ພັດທະນາເຂົ້າສູ່ລວງເລິກຍິ່ງໆຂຶ້ນ ໃນຊຸມປີຕໍ່ໜ້າ ເພື່ອຜົນປະໂຫຍດຮ່ວມກັນ ຂອງປະຊາຊົນສອງຊາດພວກເຮົາ.

ຂ້າພະເຈົ້າ ຂໍຖືໂອກາດນີ້ ອວຍພອນໄຊອັນປະເສີດ ມາຍັງ ສົມເດັດ ຈົ່ງມີພະລານາໄມສົມບູນ, ມີຄວາມກະເສມສໍາລານ ແລະ ຂໍໃຫ້ປະຊາຊົນກູເວດ ພາຍໃຕ້ພະບໍຣົມໂພທິສົມພານ ຂອງ ສົມເດັດ ຈົ່ງສືບຕໍ່ມີຄວາມກ້າວໜ້າ ແລະ ວັດທະນະຖາວອນ.

ດ້ວຍຄວາມນັບຖືຢ່າງສູງ,

ທອງລຸນ ສີສຸລິດ

ສົມເດັດ ເຊກຄ໌ ມິຊາລ ອາລ ອາເມັດ ອາລ ຈາເບີ ອາລ ຊາບາ
ກະສັດອົງທີ XVII ແຫ່ງ ລັດກູເວດ
ທີ່ ກູເວດ